# ສະພາບບັນຫາ ແລະ ແນວທາງໃນການພັດທະນາການສຶກສາກ່ອນໄວຮຽນ ກໍລະນີສຶກສາ ທີ່ ນະຄອນປາກເຊ ແລະ ເມືອງບາຈຽງຈະເລີນສຸກ ແຂວງຈຳປາສັກ

*ວຽງສະໝອນ ແກ້ວຫາວົງ[1], ສາຍສະໝອນ ປຣາສອນໄຊ[2], ບຸນສົງ ສໍແກ້ວມະນີ[3], ທິບພະວັນ ຂັນທະພອນ[4]*
*ພາກວິຊາ: ສາຂາວິທະຍາສາດການສຶກສາ ຄະນະສຶກສາສາດ*

**ບົດຄັດຫຍໍ້**

ການຄົ້ນຄວ້າຄັ້ງນີ້ມີຈຸດປະສົງ: 1. ເພື່ອສຶກສາສະພາບບັນຫາການພັດທະນາ ການສຶກສາກ່ອນໄວຮຽນ ກໍລະນີສຶກສາ ທີ່ນະຄອນປາກເຊ ແລະ ເມືອງບາຈຽງຈະເລີນສຸກ ແຂວງຈຳປາສັກ, 2. ເພື່ອປຽບທຽບຄວາມຄິດເຫັນຂອງຄູສອນຕໍ່ການພັດທະນາການສຶກສາກ່ອນໄວຮຽນ ໂດຍຈຳແນກຕາມ ສາຂາວິຊາທີ່ຮຽນຈົບ, ປະສົບການໃນການສອນ, ຂະໜາດຂອງສະຖານການສຶກສາການໄວຮຽນ 3. ເພື່ອສຶກສາແນວທາງໃນການປັບປຸງ ແລະ ພັດທະນາການສຶກສາກ່ອນໄວຮຽນ. ປະຊາກອນໃນກຸ່ມຕົວຢ່າງ 159 ຄົນ, ໃນນັ້ນ ຜູ້ບໍລິຫານສະຖານການສຶກສາ 53 ຄົນ ແລະ ຄູສອນ 106 ຄົນ, ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນແມ່ນແບບສອບຖາມ, ເຊິ່ງມີຄ່າຜັນປ່ຽນມາດຕະຖານ ຕາມຄວາມຄິດເຫັນຂອງ ຜູ້ບໍລິຫານ ຕໍ່ກັບບັນຫານການພັດທະນາການສຶກສາກ່ອນໄວຮຽນ 0.85 ແລະ ຄູສອນ 0.75, ການວິເຄາະຂໍ້ມູນໂດຍການນຳໃຊ້ໂປຣແກມສຳເລັດຮູບທາງຄອມພິວເຕີເພື່ອຫາ ຄ່າສ່ວນຮ້ອຍ (Percentage), ຄ່າສະເລ່ຍ (Arithmetic mean: $\bar{X}$), ຄ່າຜັນປ່ຽນມາດຕະຖານ (Standard Deviation: S.D).

**ຜົນການຄົ້ນຄວ້າ ພົບວ່າ:**

1) ຜູ້ບໍລິຫານ ແລະ ຄູສອນ ມີຄວາມຄິດເຫັນຕໍ່ສະພາບການພັດທະນາການສຶກສາກ່ອນໄວຮຽນ ກໍລະນີສຶກສາ ທີ່ນະຄອນປາກເຊ ແລະ ເມືອງບາຈຽງຈະເລີນສຸກ ແຂວງຈຳປາສັກໂດຍພາບລວມຢູ່ໃນລະດັບປານກາງ ແລະ ແຕ່ລະດ້ານສ່ວນຫຼາຍຢູ່ໃນລະດັບປານກາງ ເຊັ່ນດຽວກັນ.

2) ຄວາມຄິດເຫັນກ່ຽວກັບສະພາບການພັດທະນາການສຶກສາກ່ອນໄວຮຽນ ຂອງຜູ້ບໍລິຫານ ແລະ ຄູສອນ ຈຳແນກຕາມສາຂາວິຊາທີ່ຮຽນຈົບ, ປະສົບການສອນ, ຂະໜາດຂອງສະຖານການສຶກສາການໄວຮຽນໃນ 5 ດ້ານ ໂດຍພາບລວມ ແລະ ແຕ່ລະດ້ານບໍ່ແຕກຕ່າງກັນຫຼາຍ.

3) ແນວທາງໃນການປັບປຸງ ແລະ ພັດທະນາການສຶກສາກ່ອນໄວຮຽນ ກໍລະນີສຶກສາ ທີ່ນະຄອນປາກເຊ ແລະ ເມືອງບາຈຽງຈະເລີນສຸກ ແຂວງຈຳປາສັກໃນ 5 ດ້ານ: (1). ດ້ານການນຳໃຊ້ຫຼັກສູດ, (2). ດ້ານການຈັດກິດຈະກຳທີ່ສົ່ງເສີມພັດທະນາການ ແລະ ການຮຽນຮູ້ຂອງເດັກ, (3). ດ້ານການຈັດກິດຈະກຳທີ່ສົ່ງເສີມພັດທະນາການ ແລະ ການຮຽນຮູ້ຂອງເດັກ, (4). ດ້ານການປະເມີນການພັດທະນາການ ແລະ ການຮຽນຮູ້ຂອງເດັກ (5). ດ້ານການພົວພັນລະຫວ່າງຄອບຄົວກັບສະຖານການສຶກສາ ພົບວ່າ ຍັງມີສະພາບ ແລະ ບັນຫາທີ່ຄວນມີການປັບປຸງແກ້ໄຂຕື່ມເພື່ອໃຫ້ໄດ້ຄຸນນະພາບ ແລະ ປະສິດທິຜົນດີຍິ່ງຂຶ້ນຕໍ່ກັບການພັດທະນາການສຶກສາກ່ອນໄວຮຽນ ທີ່ນະຄອນປາກເຊ ແລະ ເມືອງບາຈຽງຈະເລີນສຸກ ແຂວງຈຳປາສັກ

---

[1] *ພະແນກສຶກສາ ແລະ ກິລາ ແຂວງຈຳປາສັກ Email: viengkeohavo@gmail.com*

[2] *ມະຫາວິທະຍາໄລແຫ່ງຊາດ*

[3] *ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ*

[4] *ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ*

**ຄໍາສັບສໍາຄັນ**

**(1). ບັນຫາການຈັດການສຶກສາກ່ອນໄວຮຽນ** ໝາຍເຖິງສິ່ງທີ່ເປັນຂໍ້ບົກພ່ອງ ຫຼື ອຸປະສັກສິ່ງງຜົນຕໍ່ຂະບວນການຄຸ້ມຄອງການສຶກສາຂອງເດັກກ່ອນໄວຮຽນ ແລະ ການຈັດສິ່ງແວດລ້ອມການສຶກສາຂອງຄູສອນໃນບັນດາໂຮງຮຽນອະນຸບານ.

**(2). ແນວທາງພັດທະນາການສຶກສາກ່ອນໄວຮຽນ** ໝາຍເຖິງ ຂໍ້ສະເໜີແນະນໍາ ຫຼືແນວທາງການດໍາເນີນການທີ່ຜູ້ບໍລິຫານສະຖານການສຶກສາກ່ອນໄວຮຽນ ສາມາດນໍາໄປປັບປຸງ, ຊີ້ນໍາຜູ້ປະຕິບັດການສອນ ຂອງໂຮງຮຽນຕົນກໍຄືໂຮງຮຽນອື່ນ ນໍາໄປພັດທະນາການຈັດການຮຽນ-ການສອນໃຫ້ເກີດປະສິດທິພາບ.

**(3). ຄູສອນຊັ້ນອະນຸບານ** ໝາຍເຖິງ ບຸກຄົນທີ່ປະຕິບັດໜ້າທີ່ການສອນຢູ່ໃນລະດັບອະນຸບານສຶກສາ.

# STUDY THE PROBLEMS AND DEVELOPMENT GUIDELINES FOR EARLY CHILDHOOD AND PRESCHOOL EDUCATION IN PAKSE CITY AND BAJIANGCHALEUNSOUK DISTRICT, CHAMPASAK PROVINCE

**Abstract**

The aims of this study were: 1) To investigate the problems and development the guideline for early childhood education in Pakse city and Bachiangchaleunsouk district, Champasak province; 2) To compare the teacher's opinion on early childhood development based on teacher's graduated field, teaching experience and the size of schools; 3) To improve the guideline and preschool development. This study was conducted with a total of 159 samples which included 53 administrative staffs and 106 teachers. The research tools were the questionnaire forms with the Standard Deviation: (S.D) based on the issues of preschool education development situation of administrative staff's opinion and teachers were 0.85 and 0.75, respectively. The samples were analyzed by using the statistic program and the values were Percentage, Arithmetic mean: ($\bar{X}$) and S.D.

**The results:**

1) The opinion of Administrative staffs and teachers in general showed that the preschool education development in Pakse city and Bachiangchaleunsouk district, Champasak province was in average value and other related issues were also in average value.
2) The opinion of Administrative staffs and teachers on the graduated field, teaching experience and the size of schools in 5 scopes, the result showed that no significant.
3) The improving guidelines and development for preschool education systems in case of Pakse city and Bachiangchaleunsouk district, Champasak province in 5 scopes as: 1) Using curriculum, 2) Learning activities to promote the development skill and learning of children, 3) Learning activities to promote the development skill and learning of children, 4) The valuation on learning activities of the children, 5) The correlation between family and school showed some issues needs to improve and develop for the early childhood education in Pakse city and Bachiangchaleunsouk district, Champasak province.

**Keyword:** early childhood education, teaching experience, using curriculum, the development skill and learning of children, learning activities of the children

.

**1. ພາກສະເໜີ**

ການພັດທະນາການສຶກສາ ກໍ່ຄືການພັດທະນາຊັບພະຍາກອນມະນຸດ ເປັນກຸນແຈສຳຄັນໃນການພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ໄດ້ນຳເອົາປະເທດລາວຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນປີ 2021, ຄ່ອຍໆ ກ້າວໄປສູ່ປະເທດອຸດສາຫະກຳ ແລະ ທັນສະໄໝເທື່ອລະກ້າວ. ແຜນພັດທະນາ ເສດຖະກິດ - ສັງຄົມແຫ່ງຊາດຄັ້ງທີ VIII ແລະ ມະຕິກອງປະຊຸມໃຫຍ່ສູນກາງພັກຄັ້ງທີ IX ໄດ້ເນັ້ນໃຫ້ເຫັນບົດບາດ ສຳຄັນຂອງວຽກງານສຶກສາ ໂດຍໄດ້ຍົກໃຫ້ເຫັນເຖິງຄວາມຈຳເປັນໃນການຈັດຕັ້ງປະຕິບັດບາດກ້າວ 4 ບຸກທະລຸ ເພື່ອບັນລຸນະໂຍບາຍໃໝ່ໃນການພັດທະນາປະເທດຊາດ (ລັດຖະບານ ສ.ປ.ປ ລາວ, 2021).

ເລີ່ມແຕ່ປີ 2021, ລັດຖະບານ ສປປ ລາວ ໄດ້ເຕົ້າໂຮມເອົາວຽກງານສຶກສາ ແລະ ກິລາ ເຊື່ອມສານເຂົ້າກັນ ເພື່ອເຮັດໃຫ້ການ ພັດທະນາການສຶກສາ-ກິລາໄປຕາມ 3 ລັກສະນະ 5 ຫຼັກມູນຂອງການສຶກສາ ພ້ອມທັງໄດ້ສຸມໃສ່ດຳເນີນການປະຕິຮູບລະບົບການສຶກສາແຫ່ງຊາດປັບປຸງວຽກງານກິລາ-ກາຍະກຳຢ່າງແຂງແຮງ, ກວ້າງຂວາງ, ເລິກເຊິ່ງດ້ວຍຈິດໃຈບຸກທະລຸ ເຮັດໃຫ້ດ້ານປະລິມານຄຸນນະພາບ ຂອງການສຶກສາ ເລີ່ມມີຄວາມກົມກຽວກັນມີຜົນສຳເລັດສູງຂຶ້ນກວ່າເກົ່າ, ຄ່ອຍເຊື່ອມໂຍງເຂົ້າກັບມາດຕະຖານການສຶກສາ ຂອງພາກພື້ນ ແລະ ສາກົນເປັນກ້າວໆ, ສາມາດຕອບສະໜອງບຸກຄະລາກອນ ໃນລະດັບຕ່າງໆ ໃຫ້ແກ່ອົງການຈັດຕັ້ງຂອງພັກ, ລັດ ແລະ ພາກເອກະຊົນໃນທົ່ວສັງຄົມ.

ກະຊວງສຶກສາທິການ ແລະ ກິລາ ໄດ້ໃຫ້ຄວາມສຳຄັນແກ່ການຈັດຕັ້ງປະຕິບັດ ການສຶກສາ ກ່ອນໄວຮຽນ ຊຶ່ງໄດ້ກຳນົດໃນນະໂຍບາຍຂອງລັດກ່ຽວກັບການສຶກສາໄວ້ໃນກົດໝາຍ ວ່າດ້ວຍການສຶກສາ (ສະບັບປັບປຸງ,2015) ລັດເອົາໃຈ ໃສ່ການສຶກສາກ່ອນໄວຮຽນ, ສົ່ງເສີມສຸຂະພາບ, ໂພຊະນາການຂັ້ນພື້ນຖານໃນໂຮງຮຽນ ແລະ ກຳນົດເອົາ ການສຶກສາກ່ອນໄວຮຽນປະກອບເຂົ້າຢູ່ໃນການສຶກສາໃນໂຮງຮຽນ ຂອງລະບົບການສຶກສາ ໃນ ສປປ ລາວ. ການສຶກສາກ່ອນໄວຮຽນແມ່ນການລ້ຽງດູເດັກໃນໂຮງລ້ຽງເດັກ, ການຮຽນ-ການສອນໃນໂຮງຮຽນອະນຸບານ ແລະ ສະຖານການສຶກສາກ່ອນໄວຮຽນອື່ນ ໂດຍມີຈຸດໝາຍເພື່ອພັດທະນາເດັກໃຫ້ມີການຂະຫຍາຍຕົວ ແລະ ພັດທະນາການດ້ານຮ່າງກາຍ, ສະຕິປັນຍາ, ອາລົມຈິດ, ພາສາ ແລະ ຮຽນຮູ້ຊີວິດສັງຄົມ ເພື່ອກຽມຄວາມພ້ອມເຂົ້າໂຮງຮຽນປະຖົມ. ການສຶກສາກ່ອນໄວຮຽນປະກອບດ້ວຍ 2 ຊັ້ນຮຽນ ຄື: ຊັ້ນລ້ຽງເດັກຮັບເດັກອາຍຸແຕ່ 3 ເດືອນ ຫາຕ່ຳກວ່າ 3 ປີ ແລະ ຊັ້ນອະນຸບານສຶກສາ ຮັບເດັກອາຍຸແຕ່ 3 ປີ ຫາຕ່ຳກວ່າ 6 ປີ, ໃນນັ້ນຊັ້ນອະນຸບານສຶກສາຍັງມີກຸ່ມຮຽນຜ່ານການຫຼິ້ນ ແລະ ຫ້ອງກຽມປະຖົມ (ກະຊວງສຶກສາທິການ ແລະ ກິລາ, 2020).

ວຽກງານການສຶກສາກ່ອນໄວຮຽນ ສຳລັບແຂວງຈຳປາສັກຖືເປັນວຽກງານໜຶ່ງ ທີ່ມີຄວາມສຳຄັນໃນການພັດທະນາຊັບພະຍາກອນມະນຸດ ເຊິ່ງເປັນຈຸດລິເລີ້ມ ໃນການເຂົ້າເຖິງການສຶກສາຂັ້ນພື້ນຖານ ຂອງເດັກນ້ອຍລາວ ເປັນໄວຮຽນທີ່ອ່ອນເຍົາ ໃນການສຶກສາຮຽນຮູ້ເຝິກແອບທັດສະພັດທະນາການ 5 ດ້ານ ຕາມຂັ້ນຕອນມາດຕະຖານຄຸນນະພາບ ຂອງການສຶກສາກ່ອນໄວຮຽນ. ໃນໄລຍະຜ່ານມາ ວຽກງານການສຶກສາກ່ອນໄວຮຽນ ພາຍໃນແຂວງຈຳປາສັກ ໄດ້ຮັບການເອົາໃຈໃສ່ຫ່ວງໃຍເປັນພິເສດ ເພື່ອປຸກລະດົມຂົນຂວາຍ ແລະ ທຳຄວາມເຂົ້າໃຈຕໍ່ພໍ່ແມ່ປະຊາຊົນຜູ້ປົກຄອງເດັກ, ນັກຮຽນໃຫ້ຄວາມຮ່ວມມື ສົ່ງລູກຫຼານເຂົ້າມາຮຽນ ແລະ ເຫັນໄດ້ ເຖິງຄວາມສຳຄັນຂອງວຽກງານການສຶກສາກ່ອນໄວຮຽນຫຼາຍຂຶ້ນ.

ເຖິງຢ່າງໃດກໍຕາມ ແຕ່ໃນການພັດທະນາການສຶກສາກ່ອນໄວຮຽນຢູ່ແຂວງຈໍາປາສັກ ໂດຍເວົ້າລວມ ແລະ ເວົ້າສະເພາະແມ່ນຢູ່ນະຄອນປາກເຊ ແລະ ເມືອງບາຈຽງຈະເລີນສຸກ ຍັງພົບບາງບັນຫາ ແລະ ສິ່ງທ້າທ້າຍ. ໃນນັ້ນການຂະຫຍາຍໂອກາດເຂົ້າຮຽນມີບັນຫາຄື ສະພາບແວດລ້ອມອ້ອມໃນຫ້ອງ ແລະ ນອກຮຽນ ບາງແຫ່ງຍັງບໍ່ທັນຕອບສະໜອງ, ແທດ ເໝາະກັບຄວາມຕ້ອງການພັດທະນາການຂອງເດັກ, ຂາດສິ່ງອໍານວຍຄວາມສະດວກ.

ແນວຄວາມຄິດຂອງການພັດທະນາການສຶກສາກ່ອນໄວຮຽນສອດຄ່ອງກັບຫຼັກສູດ, ຜູ້ວິໄຈຈຶ່ງມີຄວາມສົນໃຈໃນການສຶກສາຫົວຂໍ້ ***"ບັນຫາ ແລະ ແນວທາງໃນການພັດທະນາການສຶກສາກ່ອນໄວຮຽນກໍລະນີສຶກສາທີ່ ນະຄອນປາກເຊ ແລະ ເມືອງບາຈຽງຈະເລີນສຸກ ແຂວງຈໍາປາສັກ"***

**2. ວິທີການຄົ້ນຄວ້າ**

ການອອກແບບການສຶກສາ: ການສຶກສາທິດສະດີ, ຫຼັກການ, ເອກະສານ ແລະ ບົດຄົ້ນຄວ້າເອກະສານທີ່ກ່ຽວຂ້ອງກັບສະພາບບັນຫາ ແລະ ແນວທາງໃນການພັດທະນາການສຶກສາກ່ອນໄວຮຽນ ຂໍ້ມູນທີ່ໄດ້ຮັບຈາກການສຶກສາຈະໄດ້ຜູ້ວິໄຈລວບລວມກໍານົດຂອບເຂດຂອງເນື້ອໃນທີ່ຈະປະຕິບັດສ້າງເຄື່ອງມືເພື່ອໃຫ້ກວມເອົາເນື້ອໃນ.

ການຄັດເລືອກພື້ນທີ່: ສະຖານທີ່ຈະເຮັດການຄົ້ນຄວ້າ ແມ່ນບັນດາສະຖານການສຶກສາກ່ອນໄວຮຽນກໍລະນີສຶກສາຢູ່ນະຄອນປາກເຊ ແລະ ເມືອງບາຈຽງຈະເລີນສຸກ ແຂວງຈໍາປາສັກ.

ໄລຍະການເກັບກໍາຂໍ້ມູນ: ວັນທີ 01/03 /2023 - 30/04/2023

ປະຊາກອນ: ປະຊາກອນຕົວຈິງທີ່ຈະນໍາມາສຶກສາ ແມ່ນຜູ້ບໍລິຫານສະຖານການສຶກສາກ່ອນໄວຮຽນ ແລະ ຄູສອນຫ້ອງລ້ຽງເດັກ, ຄູສອນຊັ້ນອະນຸບານສຶກສາ ຊັ້ນ ອະນຸບານ 1, ອະນຸບານ 2, ອະນຸບານ 3 ແລະ ຄູສອນຫ້ອງກຽມປະຖົມ ທີ່ນະຄອນປາກເຊ ແລະ ເມືອງບາຈຽງຈະເລີນສຸກ ແຂວງຈໍາປາສັກລວມ 277 ຄົນ.

ວິທີກໍານົດກຸ່ມຕົວຢ່າງ: ຜູ້ບໍລິຫານໃນສະຖານການສຶກສາກ່ອນໄວຮຽນ: ໂຮງຮຽນລະ 1-2 ທ່ານ ໃນນັ້ນມີ ຜູ້ອໍານວຍການ 1 ທ່ານ ແລະ ຮອງຜູ້ອໍານວຍການຮັບຜິດຊອບວຽກງານວິຊາການ 1 ທ່ານ ແລະ ຄູສອນແມ່ນສຸ່ມເອົາອີງຕາມນໍານວນຄູໃນແຕ່ລະໂຮງຮຽນ.

ວິທີເກັບກໍາຂໍ້ມູນ:

ຜູ້ຄົ້ນຄວ້າໄດ້ດໍາເນີນການເກັບກໍາຂໍ້ມູນຕາມລໍາດັບດັ່ງນີ້:

1) ຂໍໜັງສືອະນຸມັດລົງເກັບກໍາຂໍ້ມູນຈາກຄະນະບໍດີຄະນະສຶກສາສາດ ມະຫາວິທະຍາໄລຈໍາປາສັກ ແລະ ນໍາສະເໜີຕໍ່ຜູ້ອໍານວຍການບັນດາໂຮງຮຽນອະນຸບານສຶກສາໃນກຸ່ມຕົວຢ່າງ ເພື່ອອະນຸຍາດໃນການລົງເກັບກໍາຂໍ້ມູນ

2) ດໍາເນີນຢາຍແບບສອບຖາມໂດຍມີການແນະນໍາວິທີໝາຍ ຫຼື ບ່ອນຂຽນຄວາມຄິດເຫັນຂອງຜູ້ຕອບ

3) ລົງສັງເກດກຸ່ມເປົ້າໝາຍ , ບັນທຶກເກັບກໍາຂໍ້ມູນຕາມຮ່າງ.

4) ຜູ້ຄົ້ນຄວ້າເກັບລວບລວມແບບສອບຖາມແລະແບບສັງເກດ ເພື່ອນໍາຂໍ້ມູນໄດ້ຈາກແບບສອບຖາມ ແລະ ແບບສັງເກດ ມາວິເຄາະຫາຄ່າສະເລ່ຍ

5) ສົ່ງໜັງສືຂອບໃຈ ເຖິງຜູ້ອໍານວຍການບັນດາສະຖານການສຶກສາກ່ອນໄວຮຽນ ທີ່ໃຫ້ຄວາມຮ່ວມມື ແລະ ອະນຸຍາດໃຫ້ລົງເກັບກໍາຂໍ້ມູນ.

**3. ຜົນໄດ້ຮັບ**

1) ຜົນການວິເຄາະຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບຖາມ

ຈາກຕາຕະລາງທີ 1

| UG | U^F@K | n = 159 | |
|---|---|---|---|
| | | D%KVK@RHIVSÀC | WEKZ¥F (%) |
| 1 | W^A^VE^J ẫhKDL: | | |
| | – Y\KL^KW@W^ | 138 | 86.79 |
| | – M\I RW@W^ | 21 | 13.21 |
| | – VE^Y6Kn | 0 | 0 |
| | UVR | 159 | 100 |
| 2 | M\WL@KWYK | | |
| | – H@V£ 5 M | 3 | 1.89 |
| | – 5 - 10 M | 73 | 45.90 |
| | – XgF@V£ 10 M | 83 | 52.21 |
| | UVR | 159 | 100 |
| 3 | A\¡ ^GAYOW\I ^K@KW@W^ | | |
| | – A\¡ ^GK¥F | 86 | 54.09 |
| | – A\¡ ^G@C | 29 | 18.24 |
| | – A\¡ ^GI XF£ | 44 | 27.67 |
| | UVR | 159 | 100 |

ຈາກຕາຕະລາງທີ 1 ພົບວ່າ: ຜູ້ບໍລິຫານ ແລະ ຄູສອນ ໃນສະຖານການສຶກສາກ່ອນໄວຮຽນ ຢູ່ນະຄອນປາກເຊ ແລະ ເມືອງບາຈຽງຈະເລີນສຸກ ແຂວງຈຳປາສັກ ທີ່ເປັນກຸ່ມຕົວຢ່າງທັງໝົດ 159 ຄົນ, ສ່ວນຫຼາຍແມ່ນຈົບສາຂາຄູອະນຸບານສຶກສາ ຈຳນວນ 138 ຄົນ ກວມເອົາ 86.79% ແລະ ຄູສອນຮຽນຈົບສາຂາປະຖົມມີ 21 ຄົນ ກວມເອົາ 13.21%. ສຳລັບປະສົບການສອນຂອງຜູ້ບໍລິຫານ ແລະ ຄູສອນໃນບັນດາສະຖານການສຶກສານັ້ນ ມີປະສົບການສອນ ຫຼາຍກວ່າ 5 ປີ, ໃນນັ້ນ ຄູມີປະສົບການສອນ 5 - 10 ປີ ລວມມີ 73 ຄົນ ກວມເອົາ 45.90%; ຄູມີປະສົບການສອນ ຫຼາຍກວ່າ 10 ປີ ຈຳນວນ 83 ຄົນ ກວມເອົາ 52.21% ແລະ ຄູສອນລະດັບກ່ອນໄວຮຽນ ທີ່ ນະຄອນປາກເຊ ແລະ ເມືອງບາຈຽງຈະເລີນສຸກ ມີປະສົບການຕໍ່າກວ່າ 5 ປີ ຈຳນວນພຽງແຕ່ 3 ຄົນ, ຄິດໄລ່ເປັນ 1.89%.

ສ່ວນຜູ້ບໍລິຫານ ແລະ ຄູສອນໃນສະຖານການສຶກສາກ່ອນໄວຮຽນ ທີ່ ນະຄອນປາກເຊ ແລະ ເມືອງບາຈຽງຈະເລີນສຸກ ເມື່ອຈຳແນກຕາມຂະໜາດໂຮງຮຽນ, ມີ 86 ຄົນ ສອນຢູ່ໂຮງຮຽນຂະໜາດນ້ອຍ, ກວມເອົາ 54.09%,ໂຮງຮຽນຂະໜາດກາງມີ 29 ຄົນ ກວມເອົາ 18.24% ແລະ ສອນຢູ່ໂຮງຮຽນຂະໜາດໃຫຍ່ມີ 44 ຄົນ, ກວມເອົາ 27.67%

2) ຜົນການວິເຄາະຂໍ້ມູນກ່ຽວກັບ ບັນຫາການພັດທະນາການສຶກສາກ່ອນໄວຮຽນຕາມຄວາມຄິດເຫັນຂອງຜູ້ບໍລິຫານ

ຕາຕະລາງ 2

| At | L]KX^@KD]G@KW@W^I KU\G]L @zKmVZhK | N£tUX^K | | | |
|---|---|---|---|---|---|
| | | $\bar{X}$ | S.D | j MNK | Y]KG]L |
| 1 | G%K@KM\HL]GX]@WG | 3.29 | 0.85 | M^K@C | 1 |
| 2 | G%K@KW%OW\P^Lj VGU¥RJ àYpY Y©KVFHt@KZhKZAYCiG]@ | 3.02 | 0.86 | M^K@C | 5 |
| 3 | G%K@KD]G@GD\@J WGWRP]GJ\ K^@K j U\ @KZhKZAYCiG]@ | 3.16 | 0.86 | M^K@C | 2 |
| 4 | G%K@KM\iRk@KP]GJ\K^@K j U\ @KZhKZAYCiG]@ | 3.07 | 0.85 | M^K@C | 4 |
| 5 | G%KBV^RW©P]KU\XV£OBYLBfV@]L W\I ^K@KW@W^ | 3.13 | 0.88 | M^K@C | 3 |
| | UVR | 3.13 | 0.86 | M^K@C | |

ຈາກຕາຕະລາງທີ 2 ພົບວ່າ: ຜູ້ບໍລິຫານໃນສະຖານການສຶກສາການສຶກສາກ່ອນໄວຮຽນ ທີ່ນະຄອນ ປາກເຊ ແລະ ເມືອງບາຈຽງຈະເລີນສຸກ ແຂວງຈຳປາສັກ ມີຄວາມຄິດເຫັນຕໍ່ ບັນຫາໃນການພັດທະນາການສຶກສາກ່ອນໄວຮຽນ ໂດຍພາບລວມ ຢູ່ໃນລະດັບປານກາງ ( $\bar{X}$ = 3.13, S.D = 0.85). ເມື່ອພິຈາລະນາເປັນແຕ່ລະດ້ານພົບວ່າທຸກດ້ານຢູ່ໃນລະດັບປານກາງ ແຕ່ດ້ານທີ່ມີຄ່າສະເລ່ຍສູງສຸດແມ່ນ ດ້ານການປະຕິບັດຫຼັກສູດຢູ່ໃນລະດັບປານກາງ ( $\bar{X}$ = 3.29, S.D = 0.61), ຮອງລົງມາແມ່ນ ດ້ານການຈັດກິດຈະກຳທີ່ສົ່ງເສີມພັດທະນາການ ແລະ ການຮຽນຮູ້ຂອງເດັກຢູ່ໃນລະດັບປານກາງ ( $\bar{X}$ = 3.16, S.D = 1.09) ແລະ ດ້ານທີ່ມີຄ່າສະເລ່ຍຕໍ່າສຸດແມ່ນ ດ້ານການສ້າງສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ການຮຽນຮູ້ຂອງເດັກ ຢູ່ໃນລະດັບປານກາງ ( $\bar{X}$ = 3.02, S.D = 0.72).

3) ຜົນການວິເຄາະຂໍ້ມູນກ່ຽວກັບ ບັນຫາໃນການພັດທະນາການສຶກສາກ່ອນໄວຮຽນຕາມຄວາມຄິດເຫັນຂອງຄູ

| U/G | L]KX^@KD]G@KW@W KU\G]L @aKmVZhK | ຄູສອນ | | | |
|---|---|---|---|---|---|
| | | $\bar{X}$ | S.D | j MNK | Y]KG]L |
| 1 | GAK@KM HL]GX]@WG | 3.29 | 0.86 | M'K@C | 1 |
| 2 | GAK@KWACW P^Lj VGUYRJ aYY Y©KVFH@KZhKZAYCG]@ | 3.11 | 0.87 | M'K@C | 5 |
| 3 | GAK@KD]G@GD\@J WCWRP]GJ\ K^@K j U\ @KZhKZAYCG]@ | 3.21 | 0.88 | M'K@C | 2 |
| 4 | GAK@KM iRK@KP]GJ\K^@K j U\ @KZhKZAYCG]@ | 3.13 | 0.87 | M'K@C | 4 |
| 5 | GAK@KPVP]KU\XV£CBYLBV@]L WI ^K@KW@W | 3.03 | 0.87 | M'K@C | 3 |
| | UVR | 3.13 | 0.87 | M'K@C | |

ຈາກຕາຕະລາງທີ 3 ພົບວ່າ: ຄູສອນໃນສະຖານການສຶກສາການສຶກສາກ່ອນໄວຮຽນ ທີ່ນະຄອນ ປາກເຊ ແລະ ເມືອງບາຈຽງຈະເລີນສຸກ ແຂວງຈຳປາສັກ ມີຄວາມຄິດເຫັນຕໍ່ ບັນຫານການພັດທະນາການສຶກສາກ່ອນໄວຮຽນ ໂດຍພາບລວມ ຢູ່ໃນລະດັບປານກາງ ( $\bar{X}$ = 3.13, S.D = 0.87). ເມື່ອພິຈາລະນາເປັນແຕ່ລະດ້ານພົບວ່າທຸກດ້ານຢູ່ໃນລະດັບປານກາງ. ການລຽງລຳດັບຄ່າສະເລ່ຍແຕ່ຫຼາຍຫາໜ້ອຍ: ດ້ານທີ່ມີຄ່າສະເລ່ຍສູງສຸດແມ່ນ ດ້ານການປະຕິບັດຫຼັກສູດ ຢູ່ໃນລະດັບປານກາງ ( $\bar{X}$ = 3.29, S.D = 0.86), ຮອງລົງມາແມ່ນ ດ້ານການຈັດກິດຈະກຳທີ່ສົ່ງເສີມພັດທະນາການ ແລະ ການຮຽນຮູ້ຂອງເດັກ ຢູ່ໃນລະດັບປານກາງ ( $\bar{X}$ = 3.21, S.D = 0,88) ແລະ ດ້ານທີ່ມີຄ່າສະເລ່ຍອັນດັບທີ 3 ແມ່ນ ດ້ານການປະເມີນ ແລະ ການພັດທະນາການການຮຽນຮູ້ຂອງເດັກ ຢູ່ໃນລະດັບປານກາງ ( $\bar{X}$ = 3.13, S.D = 0.87). ດ້ານທີ່ມີຄ່າສະເລ່ຍຕໍ່າສຸດແມ່ນ ດ້ານການພົວພັນລະຫວ່າງຄອບຄົວກັບສະຖາບັນານສຶກສາ ຢູ່ໃນລະດັບປານກາງ ( $\bar{X}$ = 3.03, S.D = 0.87).

## 4. ວິພາກຜົນ

**ສະພາບບັນຫາໃນການພັດທະນາການສຶກກ່ອນໄວຮຽນ**

ຈາກຜົນການສຶກສາສະພາບໃນການພັດທະນາການສຶກກ່ອນໄວຮຽນ ກໍລະນີສຶກສາ ທີ່ນະຄອນປາກເຊ ແລະ ເມືອງບາຈຽງຈະເລີນສຸກ ແຂວງຈຳປາສັກ ໂດຍລວມ ແລະ ແຕ່ລະດ້ານພົບວ່າ ຜູ້ບໍລິຫານ ແລະ ຄູສອນ ມີຄວາມຄິດເຫັນ ຢູ່ໃນລະດັບປານກາງ. ສະຖານການສຶກສາກ່ອນໄວຮຽນ ໄດ້ຈັດການຮຽນ-ການສອນໄປຕາມຫຼັກສູດ ທີ່ໄດ້ອະນຸມັດຈາກກະຊວງສຶກສາທິການ ແລະ ກິລາທີ່ກຳນົດໄວ້, ໄດ້ມີການຈັດການຮຽນ-ການສອນຕາມຫຼັກສູດ ທີ່ໄດ້ຮັບການອະນຸມັດ, ໄດ້ຈັດຂະບວນການຮຽນຮູ້, ການຈັດກິດຈະກຳເພື່ອສົ່ງເສີມພັດທະນາການ ແລະ ການຮຽນຮູ້ຂອງເດັກກ່ອນໄວຮຽນ ໂດຍມີຫຼາກຫຼາຍກິດຈະກຳໃຫ້ເໝາະສົມກັບສໍາອາຍຸເດັກ. ຄູໄດ້ມີການສະຫຼຸບແລະ ຖອດຖອນບົດຮຽນທີ່ສອນຜ່ານມາກັບຄູພາຍໃນໂຮງຮຽນນຳກັນ ແລະ ມີໂຮງຮຽນບາງແຫ່ງຍັງໄດ້ໄປແລກປ່ຽນບົດຮຽນນຳສະຖານການສຶກສາຕ່າງໆພາຍໃນແຂວງ. ຄູໄດ້ມີການຈັດເອກະສານປະກອບການສອນ ແລະ ຄູ່ມືນຳໃຊ້ພຽງພໍກັບຄວາມຕ້ອງການຂອງນັກຮຽນແຕ່ລະຊັ້ນຮຽນ , ໄດ້ມີການຈັດຫາສື່ການຮຽນ-ການສອນທີ່ສອດຄ່ອງກັບຈຸດມຸ່ງໝາຍຂອງຫຼັກສູດ, ມີສະຖານທີ່ສະພາບແວດລ້ອມທີ່ສະອາດ ແລະ ມີສີສັນ, ມີການຈັດຄູສອນເໝາະສົມໃນການນຳໃຊ້ ແລະ ເຂົ້າກັບສະພາບຕົວຈິງ. ສະຖານການສຶກສາກ່ອນໄວຮຽນຢູ່ນະຄອນປາກເຊ ແລະ ເມືອງບາຈຽງຈະເລີນສຸກ ໄດ້ມີການຈັດຕາຕະລາງສອນ ແລະ ກວດກາບົດສອນເປັນປະຈຳ ແລະ ມີການປະເມີນຜົນເປັນໄປຢ່າງຍຸຕິທຳ, ຖືກຕ້ອງຕາມລະບຽບຫຼັກການ, ມີຄວາມຊັດເຈນ ແລະ ເປັນທີ່ຍອມຮັບ

**(1) ດ້ານການປະຕິບັດຫຼັກສູດ**

ຈາກຜົນການສຶກສາດ້ານການປະຕິບັດຫຼັກສູດການສຶກກ່ອນໄວຮຽນ ກໍລະນີສຶກສາ ທີ່ນະຄອນປາກເຊ ແລະ ເມືອງບາຈຽງຈະເລີນສຸກ ແຂວງຈຳປາສັກ ໂດຍລວມ ແລະ ແຕ່ລະຂໍ້ ຢູ່ໃນລະດັບປານກາງ ເນື່ອງຈາກວ່າ ສະຖານການສຶກສາກ່ອນໄວຮຽນຢູ່ນະຄອນປາກເຊ ແລະ ເມືອງບາຈຽງຈະເລີນສຸກ ສ່ວຍຫຼາຍໄດ້ມີການ

ຈັດການຮຽນ-ການສອນໄປຕາມຫຼັກສູດຂອງກະຊວງສຶກສາທິການ ແລະ ກິລາທີ່ກຳນົດໄວ້, ການຈັດການຮຽນ-ການສອນຕ້ອງໄປຕາມໂຄງສ້າງຂອງຫຼັກສູດທີ່ໄດ້ຮັບການອະນຸມັດ, ຢາກໃຫ້ການຈັດການຮຽນ-ການສອນໂດຍການຈັດກິດຈະກຳໃຫ້ເໝາະສົມ ເພື່ອສົ່ງເສີມພັດທະນາການ ແລະ ການຮຽນຮູ້ຂອງເດັກກ່ອນໄວຮຽນ. ການຈັດການຮຽນ-ການສອນໃຫ້ເໝາະສົມກັບສະພາບປັດຈຸບັນ ແລະ ທ້ອງຖິ່ນ, ຄວນໃຫ້ມີການນຳໃຊ້ຫຼັກສູດມີຄວາມສອດຄ່ອງ, ຈັດຄູທີ່ມີວຸດທິການສຶກສາ, ມີຄວາມຮູ້, ມີປະສົບການໃຫ້ເໝາະສົມກັບຫ້ອງລ້ຽງເດັກ, ຫ້ອງອະນຸບານ ແລະ ຫ້ອງກຽມປະຖົມ, ກຳນົດກິດຈະກຳແຕ່ລະຊັ້ນໃຫ້ເໝາະສົມກັບຜູ້ຮຽນ, ຕ້ອງມີການກຳນົດເປົ້າໝາຍ ແລະ ຈຸດປະສົງຂອງການຮຽນ-ການສອນຕາມຈຸດມຸ່ງໝາຍຂອງຫຼັກສູດທີ່ກຳນົດໄວ້ຢ່າງລະອຽດ ແລະ ການສຶກສາເນື້ອໃນຫຼັກສູດຕ້ອງໃຫ້ມີຄວາມສຳພັນກັນກັບຈຳນວນຊົ່ວໂມງທີ່ກຳນົດໄວ້

**(2) ດ້ານການສ້າງສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ການຮຽນຮູ້ຂອງເດັກ**

ຈາກຜົນການສຶກສາດ້ານການສ້າງສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ການຮຽນຮູ້ຂອງເດັກກໍລະນີສຶກສາ ທີ່ນະຄອນປາກເຊ ແລະ ເມືອງບາຈຽງຈະເລີນສຸກ ແຂວງຈຳປາສັກ ໂດຍລວມ ແລະ ແຕ່ລະຂໍ້ ຢູ່ໃນລະດັບຫຼາຍຫາປານກາງ ເນື່ອງຈາກວ່າ ຢາກໃຫ້ມີການຈັດໂຕະຕັ່ງໃຫ້ຄູ ແລະ ນັກຮຽນພຽງພໍ, ການຈັດຫ້ອງຮຽນໃຫ້ເໝາະສົມກັບຈຳນວນພົນຂອງນັກຮຽນ, ສະຖານທີ່, ສະພາບແວດລ້ອມທີ່ສະອາດສວຍງາມ, ຫ້ອງຮຽນມີແສງສະຫວ່າງພຽງພໍ,ມີສະຖານທີ່ພັກຜ່ອນສຳລັບຄູສອນ ແລະ ນັກຮຽນຢ່າງພຽງພໍ, ມີການຈັດອາຄານໃຫ້ພຽງພໍເໝາະສົມ, ມີຕົ້ນໄມ້, ມີຮົ່ມໄມ້, ມີດອກໄມ້ປະດັບປະດາຢ່າງພຽງພໍ, ຫ້ອງຮຽນບໍ່ມີສຽງລົບກວນຈາກພາຍນອກ, ຢາກໃຫ້ມີການຈຳຈັດຂີ້ເຫຍື້ອພາຍໃນ ແລະ ພາຍນອກອ້ອມບໍລິເວນສະຖານທີ່ຮຽນ, ຄວນປັບປຸງຫ້ອງນ້ຳລວມພຽງພໍກັບການນຳໃຊ້ ແລະ ມີຄວາມສະອາດ.

**(3) ດ້ານການຈັດກິດຈະກຳສົ່ງເສີມພັດທະນາການ ແລະ ການຮຽນຮູ້ຂອງເດັກ**

ຈາກຜົນການສຶກສາດ້ານການຈັດກິດຈະກຳສົ່ງເສີມພັດທະນາການ ແລະ ການຮຽນຮູ້ຂອງເດັກກໍລະນີສຶກສາ ທີ່ນະຄອນປາກເຊ ແລະ ເມືອງບາຈຽງຈະເລີນສຸກ ແຂວງຈຳປາສັກ ໂດຍລວມ ແລະ ແຕ່ລະຂໍ້ ຢູ່ໃນລະດັບປານກາງ ເນື່ອງຈາກວ່າ ຢາກໃຫ້ຜູ້ບໍລິຫານ ແລະ ຄູສອນມີສ່ວນຮ່ວມໃນການອອກຄວາມຄິດເຫັນມີການສົນທະນາແລກປ່ຽນ (ເປັນກຸ່ມ ຫຼື ເປັນຄູ່), ຄູສອນຕ້ອງມີການສະຫຼຸບບົດຮຽນທີ່ໄດ້ສອນຜ່ານມາໂດຍຫຍໍ້ພາຍຫຼັງການສອນບົດຮຽນທັງໝົດ, ຈັດກິດຈະກຳການຮຽນ-ການສອນໃຫ້ເໝາະສົມກັບຫຼັກສູດ, ເປີດໂອກາດໃຫ້ເດັກກ້າສະແດງອອກ, ນັກຮຽນມີສ່ວນຮ່ວມໃນກິດຈະກຳຄູສ້າງຂຶ້ນຕາມເນື້ອໃນຂອງບົດຮຽນທີ່ກຳນົດໄວ້, ຢາກໃຫ້ການດຳເນີນກິດຈະກຳການສົ່ງເສີມພັດທະນາການ ແລະ ການຮຽນຮູ້ຂອງເດັກທີ່ສາມາດຕອບສະໜອງຕາມຈຸດປະສົງຂອງຫຼັກສູດ.

**(4) ດ້ານການວັດ ແລະ ປະເມີນຜົນການຮຽນ-ການສອນ**

ຈາກຜົນການສຶກສາດ້ານການວັດ ແລະ ປະເມີນຜົນການຮຽນ-ການສອນກໍລະນີສຶກສາ ທີ່ນະຄອນປາກເຊ ແລະ ເມືອງບາຈຽງຈະເລີນສຸກ ແຂວງຈຳປາສັກ ໂດຍລວມ ແລະ ແຕ່ລະຂໍ້ ຢູ່ໃນລະດັບປານກາງ ເນື່ອງຈາກວ່າ ຢາກໃຫ້ການປະເມີນຜົນເປັນໄປຢ່າງລະອຽດ, ຖືກຕ້ອງຕາມລະບຽບຫຼັກການ, ມີຄວາມຊັດເຈນ ແລະ ເປັນທີ່ຍອມຮັບ, ຢາກໃຫ້ການປະເມີນການພັດທະນາການ ແລະ ການຮຽນຮູ້ຂອງເດັກໄດ້ເປັນໄປຢ່າງຖືກຕ້ອງຕາມຫຼັກວິຊາການ, ມີການຈັດຕັ້ງຮູບແບບ ແລະ ວິທີການປະເມີນໃຫ້ມີການປະຕິບັດກົດລະບຽບ, ສະຖານການສຶກສາກ່ອນໄວຮຽນໄດ້ ກວດກາເນື້ອໃນກິດຈະກຳ

, ການແຕ່ງບົດສອນເປັນອາທິດ ປະຈຳເດືອນ, ປະຈຳພາກຮຽນໃຫ້ທັນເວລາ, ການປະເມີນແຕ່ລະດ້ານໃຫ້ມີຄວາມເໝາະສົມກັບຫຼັກສູດ ແລະ ລະດັບຊັ້ນຮຽນ, ການວັດຜົນມີຄວາມສອດຄ່ອງກັບຈຸດປະສົງ ແລະ ເນື້ອໃນຂອງກິດຈະກຳ. ນອກຈາກນັ້ນ, ຕ້ອງມີການປະຊຸມພິຈາລະນາຜົນການພັດທະນາການ ແລະ ການຮຽນຮູ້ຂອງເດັກ ແຕ່ລະເດືອນ, ພາກຮຽນ ແລະ ແຕ່ລະປີທັນເວລາ ແລະ ຢາກສະໜັບສະໜູນໃຫ້ຄູໃຊ້ຫຼາຍໆວິທີການໃນການວັດ ແລະ ປະເມີນຜົນ ແລະ ການວັດຜົນມີຄວາມສອດຄ່ອງກັບຈຸດປະສົງ ແລະ ເນື້ອໃນຂອງກິດຈະກຳ.

**(5) ດ້ານການພົວພັນລະຫວ່າງຄອບຄົວກັບສະຖານການສຶກສາ**

ຈາກຜົນການສຶກສາດ້ານການພົວພັນລະຫວ່າງຄອບຄົວກັບສະຖານການສຶກສາກໍລະນີສຶກສາ ທີ່ນະຄອນປາກເຊ ແລະ ເມືອງບາຈຽງຈະເລີນສຸກ ແຂວງຈຳປາສັກ ໂດຍລວມ ແລະ ແຕ່ລະຂໍ້ ຢູ່ໃນລະດັບປານກາງ ເນື່ອງຈາກວ່າ ຢາກໃຫ້ມີການແລກປ່ຽນຂໍ້ມູນກ່ຽວກັບການພັດທະນາການ ແລະ ການຮຽນຮູ້ຂອງເດັກ ລະຫວ່າງຄູສອນກັບພໍ່ແມ່ ຜູ້ປົກຄອງເດັກຫຼາຍຂຶ້ນກວ່າເກົ່າ. ຖ້າມີການພົວພັນ, ການສົມທົບເປັນປະຈຳກັບພໍ່ແມ່ ຫຼືຖ້າຜູ້ປົກຄອງເດັກໄດ້ເຂົ້າຮ່ວມກິດຈະກຳການສຶກສາ, ຈະຊ່ວຍໃຫ້ເດັກຈະເລີນເຕີບໂຕຕາມຄວາມຖະໜັດຂອງແຕ່ລະຄົນ ແລະ ດຳເນີນການ ເພື່ອໃຫ້ມີປະສິດທິພາບຫຼາຍຂຶ້ນ. ຄູສອນຕ້ອງມີການແຈ້ງການພັດທະນາການຂອງເດັກໃຫ້ຜູ້ປົກຄອງຮັບຮູ້ຢ່າງຕໍ່ເນື່ອງ, ເປີດໂອກາດໃຫ້ຜູ້ປົກຄອງມາພົບຄູໄດ້ຕະຫຼອດເວລາ ແລະ ຈັດກິດຈະກຳຮ່ວມລະຫວ່າງໂຮງຮຽນ ກັບພໍ່ແມ່ຜູ້ປົກຄອງເດັກ.

**5. ສະຫຼຸບຜົນ**

ຜູ້ບໍລິຫານ ແລະ ຄູສອນ ໃນສະຖານການສຶກສາກ່ອນໄວຮຽນ ທີ່ນະຄອນປາກເຊ ແລະ ເມືອງ ບາຈຽງຈະເລີນສຸກ, ແຂວງຈຳປາສັກ ທີ່ເປັນປະຊາກອນໃນກຸ່ມຕົວຢ່າງ ທັງໝົດ 159 ຄົນ ສ່ວນຫຼາຍ ຈົບຈາກສາຂາຄູອະນຸບານສຶກສາ ມີ 138 ຄົນ ກວມເອົາ 86.79%, ຈົບສາຂາຄູປະຖົມສຶກສາ ມີ 21 ຄົນ ກວມເອົາ 13.21%.ນອກນັ້ນ, ຄູອາຈານທີ່ມີປະສົບການສອນຕໍ່າກວ່າ 5 ປີ ມີ 3 ຄົນ ກວມເອົາ 1.89%, ມີປະສົບການສອນ 5-10 ປີ ມີ 73 ຄົນ ກວມເອົາ 45.9% ແລະ ມີປະສົບການສອນ 10 ປີຂຶ້ນໄປ ມີ 83 ຄົນ ກວມເອົາ 52.21%

ຜູ້ບໍລິຫານ ແລະ ຄູສອນໃນສະຖານການສຶກສາກ່ອນໄວຮຽນ ທີ່ນະຄອນປາກເຊ ແລະ ເມືອງ ບາຈຽງຈະເລີນສຸກ, ແຂວງຈຳປາສັກ: ສອນໃນໂຮງຮຽນຂະໜາດນ້ອຍ ມີ 86 ກວມເອົາ 54.09%, ຜູ້ບໍລິຫານ ແລະ ຄູສອນໃນໂຮງຮຽນຂະໜາດກາງ ມີ 29 ກວມເອົາ 18.24%, ຜູ້ບໍລິຫານ ແລະ ຄູສອນໃນໂຮງຮຽນຂະໜາດໃຫຍ່ ມີ 44 ກວມເອົາ 27.67%.

**ສະພາບບັນຫາໃນການພັດທະນາການສຶກສາກ່ອນໄວຮຽນ**

ຜົນການຄົ້ນຄວ້າພົບວ່າສະພາບບັນຫາໃນການພັດທະນາການສຶກສາກ່ອນໄວຮຽນ ກໍລະນີສຶກສາທີ່ນະຄອນປາກເຊ ແລະ ເມືອງບາຈຽງຈະເລີນສຸກ ແຂວງຈຳປາສັກ ໂດຍພາບລວມ ຢູ່ໃນລະດັບປານກາງ, ເມື່ອພິຈາລະນາແຕ່ລະດ້ານພົບວ່າຢູ່ໃນລະດັບປານກາງເຊັ່ນດຽວກັນ, ແຕ່ດ້ານທີ່ມີຄ່າສະເລ່ຍສູງສຸດແມ່ນ ດ້ານການນຳໃຊ້ຫຼັກສູດ, ຮອງລົງມາແມ່ນ ດ້ານການຈັດກິດຈະກຳທີ່ສົ່ງເສີມພັດທະນາການ ແລະ ການຮຽນຮູ້ຂອງເດັກ ແລະ ດ້ານທີ່ມີຄ່າສະເລ່ຍຕໍ່າສຸດແມ່ນ ດ້ານການສ້າງສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ການຮຽນຮູ້ຂອງເດັກ.

**(1) ດ້ານການປະຕິບັດຫຼັກສູດ** ພົບວ່າ ຜູ້ບໍລິຫານໃນສະຖານການສຶກສາການສຶກສາກ່ອນໄວຮຽນ ທີ່ນະຄອນ ປາກເຊ ແລະ ເມືອງບາຈຽງຈະເລີນສຸກ ແຂວງຈຳ

ປາສັກ ມີຄວາມຄິດເຫັນຕໍ່ ດ້ານການປະຕິບັດຫຼັກສູດທີ່ເໝາະສົມ ໂດຍພາບລວມ ຢູ່ໃນລະດັບປານກາງ, ຂໍ້ທີ່ມີຄ່າສະເລ່ຍສູງສຸດແມ່ນ ຂໍ້ການສ້າງແຜນວຽກ ແລະ ປະຕິທິນວຽກປະຈຳປີຂອງການຈັດການສຶກສາກ່ອນໄວ , ຮອງລົງມາແມ່ນ 2 ຂໍ້ ທີ່ມີຄ່າສະເລ່ຍສູງເທົ່າກັນຄື: ການວິເຄາະຫຼັກການຈັດກິດຈະກຳລະດັບການສຶກສາກ່ອນໄວຮຽນຕາມຕາຕະລາງກິດຈະກຳປະຈຳວັນ ຢູ່ໃນລະດັບປານກາງ ແລະ ຂໍ້ ການສຶກສາກ່ຽວກັບໂຄງສ້າງ ແລະ ຈຸດປະສົງຂອງແຜນການການຈັດຫາປະສົບການ.

ສຳລັບຄູສອນ ມີຄວາມຄິດເຫັນຕໍ່ ດ້ານນີ້ ໂດຍລວມ ແລະ ແຕ່ລະຂໍ້ ຢູ່ໃນລະດັບປານກາງ, ຈັດລຽງລຳດັບຂໍ້ທີ່ມີຄ່າສະເລ່ຍແຕ່ຫຼາຍຫານ້ອຍ ມີດັ່ງນີ້: ການສຶກສາ ແລະ ການທຳຄວາມເຂົ້າໃຈທີ່ກ່ຽວກັບລາຍລະອຽດຂອງເອກະສານປະກອບໃນຫຼັກສູດ, ການຈັດຫາເອກະສານ, ຫຼັກສູດໃຫ້ຄູໄດ້ມີການສຶກສາຄົ້ນຄວ້າ, ການວິເຄາະຫຼັກການສ້າງແຜນການ ການຈັດຫາປະສົບການລະດັບການສຶກສາກ່ອນໄວຮຽນ

**(2) ດ້ານການສ້າງສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ການຮຽນຮູ້ຂອງເດັກ** ພົບວ່າ ຜູ້ບໍລິຫານ ມີຄວາມຄິດເຫັນຕໍ່ດ້ານນີ້ ໂດຍລວມ ແລະ ມີ 7 ໃນ 8 ຂໍ້ ຢູ່ໃນລະດັບປານກາງ, ມີຂໍ້ດຽວຢູ່ໃນລະດັບຫຼາຍແມ່ນຂໍ້ການຈັດອຸປະກອນທີ່ມີປະໂຫຍດທາງການສຶກສາຕໍ່ກັບເດັກນ້ອຍ ກົງກັບຈຸດປະສົງ, ສອດຄ່ອງກັບການພັດທະນາການຮຽນຮູ້ ແລະ ຄວາມຕ້ອງການຂອງເດັກ; ຂໍ້ມີມີຄ່າສະເລ່ຍຮອງລົງມາແມ່ນ ການຈັດອຸປະກອນທີ່ມີປະໂຫຍດທາງການສຶກສາຕໍ່ກັບເດັກນ້ອຍ ກົງກັບຈຸດປະສົງ,ສອດຄ່ອງກັບການພັດທະນາການຮຽນຮູ້ ແລະ ຄວາມຕ້ອງການຂອງເດັກ, ອັນດັບທີ 3 ແມ່ນ ສະຖານທີ່ຕັ້ງຢູ່ຫ່າງໄກຈາກແຫຼ່ງມົນລະພິດສຳລັບຄູສອນ ມີຄວາມຄິດເຫັນຕໍ່ ດ້ານນີ້ ໂດຍລວມ ແລະ ແຕ່ລະຂໍ້ ຢູ່ໃນລະດັບປານກາງ, ຈັດລຽງລຳດັບຂໍ້ທີ່ມີຄ່າສະເລ່ຍແຕ່ຫຼາຍຫານ້ອຍ ມີດັ່ງນີ້: ການຈັດອຸປະກອນທີ່ມີປະໂຫຍດທາງການສຶກສາຕໍ່ກັບເດັກນ້ອຍ ກົງກັບຈຸດປະສົງ , ສອດຄ່ອງກັບການພັດທະນາການຮຽນຮູ້ ແລະ ຄວາມຕ້ອງການຂອງເດັກ, ຫ້ອງຮຽນທີ່ເອື້ອອຳນວຍຕໍ່ການຈັດປະສົບການຂອງເດັກ, ສະຖານທີ່ຕັ້ງຢູ່ຫ່າງໄກຈາກແຫຼ່ງມົນລະພິດ.

**(3) ດ້ານການຈັດກິດຈະກຳທີ່ສົ່ງເສີມພັດທະນາການ ແລະ ການຮຽນຮູ້ຂອງເດັກ** ພົບວ່າ ຜູ້ບໍລິຫານ ມີຄວາມຄິດເຫັນຕໍ່ ດ້ານນີ້ ໂດຍລວມ ແລະ ແຕ່ລະຂໍ້ ຢູ່ໃນລະດັບປານກາງ, ຈັດລຽງລຳດັບຂໍ້ທີ່ມີຄ່າສະເລ່ຍແຕ່ຫຼາຍຫານ້ອຍ ມີດັ່ງນີ້: ການຈັດກິດຈະກຳເໝາະສົມກັບລັກສະນະພັດທະນາການຂອງເດັກ, ການຈັດກິດຈະກຳໃນຫ້ອງຮຽນ ແລະ ນອກຫ້ອງຮຽນມີຄວາມສົມດູນກັນ , ການຈັດກິດຈະກຳເປັນບຸກຄົນ ແລະ ກິດຈະກຳກຸ່ມມີຄວາມສົມດູນກັນ

ສຳລັບຄູສອນ ມີຄວາມຄິດເຫັນຕໍ່ ດ້ານນີ້ ໂດຍລວມ ແລະ ແຕ່ລະຂໍ້ ຢູ່ໃນລະດັບປານກາງ, ຈັດລຽງລຳດັບຂໍ້ທີ່ມີຄ່າສະເລ່ຍແຕ່ຫຼາຍຫານ້ອຍ ມີດັ່ງນີ້: ການຈັດກິດຈະກຳໃນຫ້ອງຮຽນ ແລະ ນອກຫ້ອງຮຽນມີຄວາມສົມດູນກັນການຈັດກິດຈະກຳຕ່າງໆສົ່ງເສີມໃຫ້ເດັກມີການສະແດງອອກດ້ານຕ່າງໆ, ການຈັດກິດຈະກຳທີ່ເນັ້ນການຮຽນຮູ້ຢ່າງມີຄວາມສຸກມີຄວາມສະໜຸກສະໜານ.

**(4) ດ້ານການປະເມີນການພັດທະນາການ ແລະ ການຮຽນຮູ້ຂອງເດັກ** ພົບວ່າ ຜູ້ບໍລິຫານ ມີຄວາມຄິດເຫັນຕໍ່ ດ້ານນີ້ ໂດຍລວມ ແລະ ແຕ່ລະຂໍ້ ຢູ່ໃນລະດັບປານກາງ, ຈັດລຽງລຳດັບຂໍ້ທີ່ມີຄ່າສະເລ່ຍແຕ່ຫຼາຍຫານ້ອຍ ມີດັ່ງນີ້: ຄວາມຮູ້ຄວາມເຂົ້າໃຈກ່ຽວກັບການປະເມີນການພັດທະນາການ ແລະ ການຮຽນຮູ້ຂອງເດັກ, ການສ້າງຄວາມຮ່ວມມືກັບຜູ້ປົກຄອງໃນການປະເມີນການພັດທະນາການເດັກ, ການໃຊ້ການປະເມີນພັດທະນາການໃຫ້ເໝາະສົມກັບໄວ ແລະ ພັດທະນາການຂອງເດັກ.

ສຳລັບຄູສອນ ມີຄວາມຄິດເຫັນຕໍ່ ດ້ານນີ້ ໂດຍລວມ ແລະ ແຕ່ລະຂໍ້ ຢູ່ໃນລະດັບປານກາງ, ຈັດລຽງລຳດັບຂໍ້ທີ່ມີຄ່າສະເລ່ຍແຕ່ຫຼາຍຫານ້ອຍ ມີດັ່ງນີ້: ການປະເມີນຫຼາຍໆຄັ້ງກ່ອນທີ່ຈະສະຫຼຸບຜົນ, ການນຳຜົນການປະເມີນການພັດທະນາການມາໃຊ້ໃນການປັບປຸງ ແລະ ຈັດປະສົບການໃຫ້ແກ່ເດັກ, ການລາຍງານຜົນການປະເມີນຜົນການພັດທະນາການເດັກໃຫ້ຜູ້ປົກຄອງຮັບຮູ້ຢ່າງສະໝໍ່າສະເໝີ.

**(5) ດ້ານການພົວພັນລະຫວ່າງຄອບຄົວກັບສະຖານການສຶກສາ** ພົບວ່າ: ຜູ້ບໍລິຫານ ມີຄວາມຄິດເຫັນຕໍ່ ດ້ານນີ້ ໂດຍລວມ ແລະ ແຕ່ລະຂໍ້ ຢູ່ໃນລະດັບປານກາງ, ຈັດລຽງລຳດັບຂໍ້ທີ່ມີຄ່າສະເລ່ຍແຕ່ຫຼາຍຫານ້ອຍ ມີດັ່ງນີ້: ການເປີດໂອກາດໃຫ້ຜູ້ປົກຄອງມາພົບຄູໄດ້ຕະຫຼອດເວລາ, ມີການປະຖົມນິເທດໃຫ້ຜູ້ປົກຄອງ, ມີການແຈ້ງການພັດທະນາການຂອງເດັກໃຫ້ຜູ້ປົກຄອງຮັບຮູ້ຢ່າງຕໍ່ເນື່ອງ

ສຳລັບຄູສອນ ມີຄວາມຄິດເຫັນຕໍ່ ດ້ານນີ້ ໂດຍລວມ ແລະ ແຕ່ລະຂໍ້ ຢູ່ໃນລະດັບປານກາງ, ຈັດລຽງລຳດັບຂໍ້ທີ່ມີຄ່າສະເລ່ຍແຕ່ຫຼາຍຫານ້ອຍ ມີດັ່ງນີ້: ການເປີດໂອກາດໃຫ້ຜູ້ປົກຄອງມາພົບຄູໄດ້ຕະຫຼອດເວລາ, ມີການແຈ້ງການພັດທະນາການຂອງເດັກໃຫ້ຜູ້ປົກຄອງຮັບຮູ້ຢ່າງຕໍ່ເນື່ອງ, ການຕິດຕໍ່ ສື່ສານລະຫວ່າງຄູ ແລະ ຜູ້ປົກຄອງຢ່າງສະໝໍ່າສະເໝີ.

**6. ຄວາມຮູ້ບຸນຄຸນ**

ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນມາຍັງຄະນະບໍດີ ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ, ຫ້ອງການວິທະຍາສາດ ແລະ ຮູ້ບຸນຄຸນມາຍັງຄູ-ອາຈານທຸກທ່ານທີ່ໃຫ້ຄຳຊີ້ແນະແນວທາງ ແລະ ສະໜັບສະໜູນຢ່າງໃກ້ຊິດໃຫ້ຄວາມຮູ້, ຄວາມກະລຸນາ, ຄວາມຊ່ວຍເຫຼືອ, ທຸ້ມເທເຫື່ອແຮງໃສ່ໃນການສິດສອນເພື່ອຖ່າຍທອດຄວາມຮູ້ທາງດ້ານວິຊາການ, ສະຕິປັນຍາ, ປະສົບການ ແລະ ໃຫ້ໂອກາດການສຶກສາຄົ້ນຄວ້າຕັ້ງແຕ່ຕົ້ນຈົນປະສົບຜົນສຳເລັດຢ່າງບໍ່ຮູ້ອິດເມື່ອຍ.

ຂໍສະແດງຄວາມຂອບໃຈມາຍັງ ທ່ານ ຣສ ປອ ສາຍສະໝອນ ປຣາສອນໄຊ ປະທານທີ່ປຶກສາຂຽນບົດວິທະຍານິພົນ ແລະ ຜູ້ຊ່ວຍທີ່ປຶກສາ ປທ ບຸນສິງ ສໍແກ້ວມະນີ, ທ່ານ ປທ ທິບພະວັນ ຂັນທະພອນ ທີ່ໄດ້ໃຫ້ຄຳປຶກສາຊີ້ແນະມາໂດຍຕະຫຼອດໃນດ້ານຄວາມຮູ້ປະສົບການເຮັດໃຫ້ຜູ້ສຶກສາຄົ້ນຄວາໄດ້ຮັບຄວາມຮູ້ ແລະ ປະສົບການຢ່າງກວ້າງຂວາງຈົນສາມາດເຮັດໃຫ້ບົດວິທະຍານິພົນສະບັບນີ້ ມີຄວາມຖືກຕ້ອງສົມບູນປະສົບຜົນສຳເລັດໄປດ້ວຍດີ.

ຂໍສະແດງຄວາມຂອບໃຈຢ່າງສູງມາຍັງບັນດາທ່ານອາຈານຜູ້ຊ່ຽວຊານທັງ 3 ທ່ານ ທີ່ໃຫ້ຄວາມກວດແກ້ເຄື່ອງມື, ໃຫ້ຄວາມຮູ້ ແລະ ຄຳແນະນຳຕ່າງໆກ່ຽວກັບການຂຽນບົດວິທະຍາຄັ້ງນີ້ ທ່ານ ຊອ. ປອ. ລົບພະລັກ ອຸທິດປັນຍາ, ທ່ານ ຊອ. ປທ. ແກ້ວອຸດອນ ມະຫາທອງ, ທ່ານ ປອ. ສົມພອນ ແສງດວງຈັນ ທີ່ໃຫ້ຄວາມຊ່ວຍເຫຼືອເປັນຜູ້ຊ່ຽວຊານກວດສອບເຄື່ອງມືໃນການສຶກສາຄັ້ງນີ້ທີ່ເຮັດໃຫ້ເຄື່ອງມືມີຄວາມສົມບູນແບບຫຼາຍຍິ່ງຂຶ້ນ.

ຂອບໃຈເປັນຢ່າງສູງມາຍັງທ່ານປະທານ, ຄະນະກຳມະການທຸກໆທ່ານທີ່ໃຫ້ໂອກາດໃນການປ້ອງກັນບົດວິທະຍານິພົນຄັ້ງນີ້ທີ່ມີຄວາມເມດຕາເອົາໃຈໃສ່ໃຫ້ຄຳແນະນຳທີ່ດີອັນເປັນປະໂຫຍດໃຫ້ແກ່ຜູ້ຄົ້ນຄວ້າ ແລະ ໄດ້ນຳມາປັບປຸງແກ້ໄຂຕາມຄຳແນະນຳ ຈົນເຮັດໃຫ້ບົດວິທະຍານິພົນບົດສະບັບນີ້ມີຄວາມຖືກຕ້ອງຕາມຮູບແບບ ແລະ ສົມບູນໄປດ້ວຍດີ.

**7. ເອກະສານອ້າງອີງ**

ກະຊວງສຶກສາທິການ ແລະ ກິລາ (2015), ຈັນຍະບັນຂອງຄູ, ນະຄອນຫຼວງວຽງຈັນ ໂຮງພິມສຶກສາ.

ກະຊວງສຶກສາທິການ ແລະ ກິລາ (1998), ກົດລະ

ບຽບໂຮງລ້ຽງເດັກ ແລະ ໂຮງຮຽນ ອະນຸບານ.

ກະຊວງສຶກສາທິການ ແລະ ກິລາ (2016), ກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ), ໂຮງພິມສຶກສາ.

ກະຊວງສຶກສາທິການ ແລະ ກິລາ (2020), ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2021 - 2025).

ກົມອະນຸບານ ແລະ ປະຖົມສຶກສາ (2015), ຫຼັກການຄຸ້ມຄອງ ແລະ ລະບຽບຄຸ້ມຄອງຄູ ຄວາມຮັບຜິດຊອບຂອງພໍ່ແມ່ ຜູ້ປົກຄອງໃນສະຖານການສຶກສາກ່ອນໄວຮຽນ, ນະຄອນຫຼວງວຽງຈັນ ບໍລິສັດລັດວິສາຫະກິດ ໂຮງພິມສຶກສາ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ກະຊວງສຶກສາທິການ ແລະ ກິລາ (2010), ຫຼັກສູດຊັ້ນອະນຸບານສຶກສາ, ໂຮງພິມສຶກສາ.

ສີຫາ ພັນທະບາ, ສະເຫຼີມສັກ ພາບຸດດີ (1998), ວິທີສອນວິທະຍາສາດສັງຄົມ III ສໍາລັບໂຮງຮຽນສ້າງຄູ ລະບົບ 11+3 ປີທີ III, ໂຮງພິມຊາວໜຸ່ມ.

ສີນນະວົງ ມອນມະນີ, ບຸນກວ້າງ ຈັນສີນາ (2008, 32-38), ຫຼັກການສອນປະຖົມ, ໂຮງພິມ Nhan dan Printing House HCMC.

ສີນນະວົງ ມອນມະນີ ແລະ ກົ່ງຄໍາ ແສນສຸກ (1998) ປະຫວັດການຮຽນການສອນຂອງລາວສໍາລັບ. ໂຮງຮຽນສ້າງຄູລະບົດ 11+3 ປີທີ II, ໂຮງພິມແຫ່ງລັດ.

ສູນພັດທະນາຄູ ກະຊວງສຶກສາທິການ (1998), ການວັດ ແລະ ປະເມີນຜົນ, ພິມທີ່ ປາກປາສັກການພິມ.

ສົມລອຍ ສຸດຕິຍະໄທ ພ້ອມຄະນະ (2009), ວັດຜົນ ແລະ ປະເມີນຜົນ ສາຍສ້າງຄູມັດທະຍົມຕົ້ນ ລະບົບ 3 ປີ, ປີທີ 3, ໂຮງພິມ Nhan dan Printing House HCMC.

ຈາມະຣີ ຊຽງທອງ (2549), ສັງຄົມວິທະຍາການພັດທະນາ, ໂຮງພິມ ໂອ.ເອສ Printing House.

ບຸນເລີດ ຈັນດີນຸພາບ ພ້ອມຄະນະ (2009), ເທັກໂນໂລຢີການສຶກສາ ສາຍສ້າງຄູມັດທະຍົມຕົ້ນ ລະບົບ 3 ປີ, ປີທີ 2, ໂຮງພິມ Nhan dan Printing House HCMC.

ສີພາພອນ ມະນີວັນ (1996), ຮູບແບບການຈັດການໂຮງຮຽນອະນຸບານໃນ ສປປ ລາວ, ມະຫາວິທະຍາໄລຂອນແກນ.